ສຳນັກງານໃຫຍ່

ເລກທີ: 00337/ທຄຕລ.2025
ນະຄອນຫຼວງວຽງຈັນ, ວັນທີ: 31 JAN 2025

# ໜັງສືແຈ້ງເຊີນ

**ເຖິງ** : ບັນດາບໍລິສັດ ຫ້າງຮ້ານຕົວແທນຈຳໜ່າຍອຸປະກອນໄອທີ ໃນນະຄອນຫຼວງວຽງຈັນ.
**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາໂປຣແກຣມ Anti-Virus License ປະຈຳປີ 2025.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງມາຍັງທ່ານຊາບບັນດາບໍລິສັດ ແລະ ຫ້າງຮ້ານຕົວແທນຈຳໜ່າຍເຄື່ອງໄອທີ Anti-Virus License ປະຈຳປີ 2025, ເພື່ອມານຳໃຊ້ເຂົ້າໃນວຽກງານວິຊາສະເພາະຂອງທະນາຄານ ຈຶ່ງໄດ້ແຈ້ງເຊີນມາຍັງທ່ານເພື່ອຍື່ນຊອງເຂົ້າຮ່ວມປະມູນ ດັ່ງມີລາຍລະອຽດຂ້າງລຸ່ມນີ້:

| ລ.ດ | ລາຍການ | ຈຳນວນ |
|---|---|---|
| 1. | Kaspersky Endpoint Security for Business-Select | 500 Licenses |
| 2. | Sangfor Endpoint Secure | 50 Licenses |

- **ເງື່ອນໄຂຂອງບໍລິສັດ ຫ້າງຮ້ານຕົວແທນຈຳໜ່າຍອຸປະກອນໄອທີ ມີຄວາມຕ້ອງການຍື່ນຊອງປະມູນລາຄາຕ້ອງປະກອບເອກະສານໃຫ້ຄົບຖ້ວນດັ່ງລຸ່ມນີ້:**
- **ເອກະສານ ຊອງທີ1:**
  1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດຈຳໜ່າຍເຄື່ອງອຸປະກອນໄອທີ, ດຳເນີນທຸລະກິດຢ່າງໜ້ອຍ 02 ປີຂຶ້ນໄປ, ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປີ 2024 ແລະ ໃບຢັ້ງຢືນການເປັນຕົວແທນຈຳໜ່າຍ (ຖ້າມີ) .
  2. ເອກະສານລາຍລະອຽດສະເປັກສິນຄ້າ, ການຮັບປະກັນສິນຄ້າ, ໄລຍະເວລາການຈັດສົ່ງສິນຄ້າ ແລະ ຂໍ້ມູນຕ່າງໆ ຕາມ format ທີ່ຕິດຄັດມາພ້ອມນີ້.
  3. ເອກະສານຂ້າງເທິງແມ່ນໃຫ້ຍື່ນກ່ອນ ວັນສຸກ **ວັນທີ 14/02/2025 ເວລາ 11:00 ໂມງ** ໂດຍການຍື່ນເອກະສານສະບັບແທ້ມາທີ່ ພະແນກຫ້ອງການບໍລິຫານ-ການເງິນ ແລະ ສົ່ງຟາຍເຂົ້າ **E-mail:** **procurement@bcel.com.la ແລະ inspect-it@bcel.com.la** ເພື່ອໃຫ້ສູນໄອທີໄດ້ກວດສະເປັກ.
- **ເອກະສານ ຊອງທີ2: (ປິດຊອງ)**
  1. ໃບສະເໜີລາຄາໃຫ້ລະບຸລາຄາຫົວໜ່ວຍແຕ່ລະລາຍການ ແລະ ລວມມູນຄ່າອາກອນທັງໝົດເປັນສະກຸນເງິນກີບໃຫ້ຄົບຖ້ວນ.
  2. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 10% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນ **(ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 25/05/2025)** ຫຼື ແຊັກທີ່ວິຊ້າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນ.

3. ໃນວັນ ອັງຄານ **ວັນທີ 25/02/2025 ເວລາ 09:00 ໂມງ** ແມ່ນມື້ເປີດຊອງປະມູນ. ສະນັ້ນ, ໃຫ້ຜູ້ສະໜອງທີ່ຜ່ານການຄັດເລືອກຈາກເອກະສານຊອງທີ 1 ມາຍື່ນຊອງລາຄາມາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 5 ອາຄານ C.

**ໝາຍເຫດ:**

- ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ.

❖ **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

1. ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຮັບຜິດຊອບຄ່າທຳນຽມໃນການຈົດທະບຽນສັນຍາ.
2. ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ແມ່ນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 10% ຂອງມູນຄ່າລວມທີ່ສະເໜີປະມູນ.

**ການຊຳລະແມ່ນຈ່າຍງວດດຽວ 100% ຂອງມູນຄ່າ** ພາຍໃນ 25 ວັນລັດຖະການ ພາຍຫຼັງໄດ້ຮັບເຄື່ອງ ແລະ ກວດກາຄວາມຖືກຕ້ອງຈາກຄະນະກຳມະການຕິດຕາມກວດກາ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ຜູ້ອຳນວຍການ**

ແຂວງ ທະນາຄານ ສປປ ລາວ ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC ນະຄອນ ວຽງຈັນ ສາລວງ

**ນ. ສາຍສະໜອນ ຈັນທະຈັກ**

# (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ …………../ທຄຕລ, ລົງວັນທີ ……………………..

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ 2020 | ໃບອະນຸຍາດດຳເນີນທຸລະກິດ 2021 | ໄລຍະເວລາໃນການດຳເນີນທຸລະກິດ | ຜົນງານຜ່ານມາ (ເຄີຍສະໜອງໃຫ້ພາກສ່ວນໃດແນ່) | ປະເພດ / ວັດສະດຸ / ຍີ່ຫໍ້ສິນຄ້າ | ປະເທດຜະລິດ | ການຮັບປະກັນສິນຄ້າ | ກຳນົດສົ່ງ (ວັນ) | |
| 1 | ບ/ສ……… | (xxx/ 02.01.2015) | (xxx/ 02.01.2015) | (xxx/ 02.01.2015) | …. ປີ | (ໃຫ້ລະບຸ) | | ປະເທດ....... | …. ປີ | …… | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ .........................

ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:

ຊື່:

ໂທ: